**Curriculum on Basic Skills in legal profession**
**for enforcement and court judgement (Laos)**

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 3
## The roles of enforcement and court judgement
ພາລະບົດບາດອົງການປະຕິບັດຄຳຕັດສິນຂອງສານ

### 1. ລະບົບອົງການປະຕິບັດຄຳຕັດສິນຂອງສານ

ລະບົບອົງການປະຕິບັດຄຳຕັດສິນຂອງສານຢູ່ ສປປ ລາວ ປະກອບມີ 02 ຂັ້ນ (ຍົກເວັ້ນອົງການປະຕິບັດຄຳຕັດສິນຂອງສານທະຫານ ), ຊຶ່ງໃນບົດຮຽນນີ້ຈະລົງເລິກກ່ຽວກັບລະບົບອົງການປະຕິບັດຄຳຕັດສິນຂອງສານທີ່ຂຶ້ນກັບ ກະຊວງຍຸຕິທຳເປັນເຈົ້າການໃນການຄຸ້ມຄອງມີຄື:

- ຫ້ອງການປະຕິບັດຄຳຕັດສິນຂອງສານ;
- ໜ່ວຍງານປະຕິບັດຄຳຕັດສິນຂອງສານ.

ຫ້ອງການປະຕິບັດຄຳຕັດສິນຂອງສານ ແລະ ໜ່ວຍງານປະຕິບັດຄຳຕັດສິນຂອງສານແມ່ນປະຕິບັດຄຳຕັດສິນຂອງສານກ່ຽວກັບການໃຊ້ແທນຄ່າເສຍຫາຍທາງແພ່ງ, ຄ່າປັບໃໝ, ການຮິບຊັບ, ຮິບວັດຖຸສິ່ງຂອງ ແລະ ໂທດດັດສ້າງໂດຍບໍ່ຕັດອິດສະລະພາບໃນຄະດີອາຍາ.

ສ່ວນຫ້ອງການປະຕິບັດຄຳຕັດສິນຂອງສານທະຫານປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານທະຫານທີ່ໃຊ້ໄດ້ຢ່າງເດັດຂາດ, ໃນບົດຮຽນນີ້ຈະບໍ່ໄດ້ລົງເລິກກ່ຽວກັບບັນຫານີ້.

### 2. ພາລະບົດບາດຂອງຫ້ອງການປະຕິບັດຄຳຕັດສິນຂອງສານ

ຫ້ອງການປະຕິບັດຄຳຕັດສິນຂອງສານ ແມ່ນການຈັດຕັ້ງໜຶ່ງຂອງພະແນກຍຸຕິທຳແຂວງ, ນະຄອນຫຼວງ ມີພາລະບົດບາດປະຕິບັດຄຳຕັດສິນຂອງສານ ແລະ ນິຕິກຳອື່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 (ໃໝ່) ຂອງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນເປັນຕົ້ນແມ່ນ:

- ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕັດສິນຄະດີແພ່ງຂັ້ນຕົ້ນ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານປະຊາຊົນເມືອງ, ເທດສະບານ, ສານປະຊາຊົນແຂວງ, ນະຄອນຫຼວງ;

- ຄຳສັ່ງ, ຄຳຊີ້ຂາດ ແລະຄຳຕັດສິນຄະດີອາຍາຂັ້ນຕົ້ນ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານປະຊາຊົນເມືອງ,ເທດສະບານ, ສານປະຊາຊົນແຂວງ, ນະຄອນ ກ່ຽວກັບການໃຊ້ແທນຄ່າເສັຍຫາຍທາງແພ່ງ, ໂທດປັບໃໝ, ໂທດຮິບຊັບ, ໂທດຮິບວັດຖຸສິ່ງຂອງ ແລະ ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ;

- ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາຄະດີແພ່ງຂັ້ນອຸທອນ ທີ່ໃຊ້ໄດ້ຢ່າງເດັດຂາດ ຂອງສານປະຊາຊົນ ແຂວງ, ນະຄອນ ແລະ ສານອຸທອນ;

- ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາຄະດີອາຍາຂັ້ນອຸທອນ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານປະຊາຊົນແຂວງ, ນະຄອນ ແລະ ສານອຸທອນ ກ່ຽວກັບການໃຊ້ແທນຄ່າເສັຍຫາຍທາງແພ່ງ, ໂທດປັບໃໝ, ໂທດຮິບຊັບ, ໂທດຮິບວັດຖຸສິ່ງຂອງ ແລະ ໂທດ ດັດສ້າງ ໂດຍບໍ່ຕັດອິດສະລະພາບ;

- ຄຳສັ່ງ, ຄຳຊີ້ຂາດ ແລະຄຳພິພາກສາຄະດີແພ່ງຂອງສານປະຊາຊົນສູງສຸດ ທີ່ບໍ່ສົ່ງ ຄະດີ ໃຫ້ສານຂັ້ນລຸ່ມພິຈາລະນາຄືນໃໝ່;

- ຄຳສັ່ງ, ຄຳຊີ້ຂາດ ແລະຄຳພິພາກສາຄະດີອາຍາ ຂອງສານປະຊາຊົນສູງສຸດ ທີ່ບໍ່ສົ່ງ ຄະດີ ໃຫ້ສານຂັ້ນລຸ່ມພິຈາລະນາຄືນໃໝ່ ກ່ຽວກັບການໃຊ້ແທນຄ່າເສັຍຫາຍທາງ ແພ່ງ, ໂທດປັບໃໝ, ໂທດຮິບຊັບ, ໂທດຮິບວັດຖຸສິ່ງຂອງ ແລະ ໂທດດັດສ້າງໂດຍ ບໍ່ຕັດອິດສະລະພາບ;

- ຄຳຕັດສິນ ຫລືຄຳພິພາກສາຂອງສານ ບອກວ່າໃຫ້ປະຕິບັດພາງ;

- ຄຳສັ່ງໃຫ້ປະຕິບັດບົດບັນທຶກການໄກ່ເກັ່ຍຂອງສານ;

- ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕັດສິນຂອງສານຕ່າງປະເທດ ທີ່ໃຊ້ໄດ້ຢ່າງເດັດຂາດ ຊຶ່ງ ສານປະຊາຊົນແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຮັບຮູ້ ແລະ ໃຫ້ປະຕິບັດ;

- ບົດບັນທຶກການໄກ່ເກັ່ຍ ແລະ ຄຳຕັດສິນ ຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃນ ແລະ ຕ່າງປະເທດ ຕາມສົນທິສັນຍາລະຫວ່າງປະເທດ ທີ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ເຂົ້າຮ່ວມເປັນພາຄີ ຊຶ່ງໄດ້ຮັບການຢັ້ງຢືນຈາກສານປະຊາຊົນ[1].

**ຫ້ອງການປະຕິບັດຄຳຕັດສິນຂອງສານມີພາລະບົດບາດຕົ້ນຕໍດັ່ງນີ້:**

- ຄົ້ນຄວ້າຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ແລະນິຕິກຳອື່ນ ເພື່ອກະກຽມປະຕິບັດ; ທວງເອົາຂອງ ກາງຄະດີ ລວມທັງບົດບັນທຶກການຍຶດ, ການອາຍັດ ຂອງກາງຄະດີດັ່ງກ່າວທີ່ຄ້າງຄາຈາກພາກສ່ວນທີ່ກ່ຽວຂ້ອງເພື່ອ ນຳມາປະຕິບັດ;

- ສະເໜີໃຫ້ສານທີ່ໄດ້ລົງຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ອະທິບາຍຢ່າງເປັນ ລາຍລັກອັກສອນ ກ່ຽວກັບບັນຫາໃດບັນຫາໜຶ່ງ ທີ່ຍັງບໍ່ທັນຈະແຈ້ງ;

- ສະເໜີຕໍ່ເຈົ້າໜ້າທີ່ຕຳຫລວດມີມາດຕະການຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີເຈດຕະນາຫລົບຫລີກການປະຕິບັດຄຳຕັດສິນຂອງສານ ໂດຍສະເພາະການອອກນອກປະເທດ;

[1] ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008, ມາດຕາ 05

- ອອກໝາຍຮຽກຄູ່ຄວາມ ເພື່ອປະຕິບັດຄຳຕັດສິນຂອງສານ;

- ອອກຄຳສັ່ງອາຍັດ, ຄຳສັ່ງຍຶດຊັບ, ຄຳສັ່ງຍົກຍ້າຍ, ຄຳສັ່ງໃຫ້ພາຕົວ, ຄຳສັ່ງປັບ ໃໝ ແລະ ຄຳສັ່ງອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອປະຕິບັດຄຳຕັດສິນຂອງສານ;

- ສະເໜີຂໍຄຳເຫັນນຳຂັ້ນເທິງຂອງຕົນ ໃນການປະຕິບັດຄຳຕັດສິນຂອງສານ ທີ່ຫຍຸ້ງຍາກສັບສົນ;

- ຊີ້ນຳທາງດ້ານວິຊາການ ແລະ ກວດກາການປະຕິບັດວຽກງານ ຂອງໜ່ວຍງານປະຕິບັດຄຳຕັດສິນຂອງສານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

- ປ່ຽນແປງ, ໂຈະ, ຍົກເລີກ ຫລື ລົບລ້າງຄຳສັ່ງຂອງໜ່ວຍງານປະຕິບັດຄຳຕັດສິນຂອງສານທີ່ບໍ່ຖືກຕ້ອງຕາມກົດໝາຍ ຫລື ສະເໜີໃຫ້ລົບລ້າງນິຕິກຳຂອງຂະແໜງການອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ທີ່ຂັດກັບຄຳ ຕັດສິນຂອງສານ ຫລື ລະບຽບກົດໝາຍ, ພ້ອມກັນນັ້ນ ກໍຕ້ອງໃຫ້ຄຳແນະນຳ ເພື່ອປະຕິບັດຄຳຕັດສິນຂອງສານໃຫ້ຖືກຕ້ອງ;

- ລາຍງານການປະຕິບັດຄຳຕັດສິນຂອງສານໃຫ້ໄອຍະການປະຊາຊົນຂັ້ນຂອງຕົນ ຢ່າງເປັນປົກກະຕິ ຫລື ຕາມການສະເໜີ;

- ລາຍງານກ່ຽວກັບການປະຕິບັດໜ້າທີ່ວຽກງານຂອງຕົນໃຫ້ພະແນກຍຸຕິທຳແຂວງ, ນະຄອນ ແລະກະຊວງຍຸ ຕິທຳຢ່າງເປັນປົກກະຕິ ;

- ປະຕິບັດສິດ ແລະ ໜ້າທີ່ອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ[2].

ນອກພາລະບົດບາດທີ່ກ່າວມາຂ້າງເທິງນັ້ນ ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານຕ້ອງແບ່ງ ຄວາມຮັບຜິດຊອບລະຫວ່າງຫົວໜ້າຫ້ອງການ ແລະ ຮອງຫົວໜ້າຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃຫ້ຈະແຈ້ງ ແລະ ຂາດຕົວໃນການບໍລິຫານວຽກງານ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ໃນນັ້ນ ໃຫ້ເອົາໃຈໃສ່ຍົກສູງຄວາມຮັບຜິດຊອບ ດັ່ງນີ້:

- ທຸກສຳນວນຄຳຕັດສິນຂອງສານທີ່ໄດ້ຮັບຈາກພະແນກຍຸຕິທຳ ຕ້ອງຮັບປະກັນຈົດເຂົ້າ ຂາເຂົ້າໃຫ້ຖືກຕ້ອງຄົບ , ຖ້ວນພາຍໃນກຳນົດ ໜຶ່ງວັນ ລັດຖະການ ,ຈາກນັ້ນ ຫົວໜ້າຫ້ອງການຕ້ອງຄົ້ນຄວ້າ ແລະ ມີຄຳເຫັນມອບສຳນ ວນໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານ ໃນກຳນົດ ສີ່ວັນ ລັດຖະການ ພາຍໃນກຳນົດເວລາດັ່ງກ່າວ ຕ້ອງສົ່ງໃຫ້ ໜ່ວຍງານສະຖິຕິ ບັນທຶກເຂົ້າໂປຣແກຣມ ໃຫ້ສຳເລັດ;

[2] ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008, ມາດຕາ 16

- ຫົວໜ້າຮອງຫົວໜ້າຫ້ອງການປະຕິບັດຄຳຕັດສິນຂອງສານ , ຕ້ອງຕິດຕາມ ກວດກາ ແລະ ຊຸກຍູ້ ,ພະນັກງານປະຕິບັດຄຳຕັດສິນຂອງສານ ທີ່ຮັບຜິດຊອບຄະດີ ໃຫ້ຂຶ້ນແຜນການ ນຳເອົາຄຳຕັດສິນອອກມາປະຕິບັດ;

- ທຸກຄຳຕັດສິນທີ່ຈະນຳມາປະຕິບັດ ຕ້ອງນຳເຂົ້າຜ່ານກອງປະຊຸມ ເພື່ອປຶກສາຫາລື ກ່ຽວກັບວິທີການ ,ຂັ້ນຕອນ ,ກຳນົດເວລາ ການປະຕິບັດ .ທຸກກໍລະນີ ທີ່ຈະຕ້ອງໄດ້ຍົກຍ້າຍ ,ບາງຄະດີທີ່ເຫັນວ່າຈະມີຜົນກະທົບຕໍ່ການປະຕິບັດ ຫ້ອງການຕ້ອງໄດ້ລາຍງານຂໍທິດຊີ້ນຳຈາກກະຊວງຍຸຕິທຳ ,ອົງການປົກຄອງ ,ອົງການໄອຍະການປະຊາຊົນ ຂັ້ນຂອງຕົນ, ສະພາປະຊາຊົນແຂວງ ແລະ ນະຄອນຫຼວງ;

- ສຳລັບຄຳຕັດສິນທີ່ໄດ້ປະຕິບັດສຳເລັດ ພາຍຫຼັງຫົວໜ້າຫ້ອງການ ໄດ້ຮັບບົດລາຍງານຈາກພະນັກງານປະຕິບັດຄຳຕັດສິນຂອງສານຜູ້ຮັບຜິດຊອບຄະດີ ຕ້ອງກວດກາໃຫ້ລະອຽດ ,ຖ້າເຫັນວ່າການປະຕິບັດຜ່ານມາໄດ້ດຳເນີນຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ຈຶ່ງອອກຄຳສັ່ງປິດສຳນວນຄຳຕັດສິນຂອງສານ;

- ຫ້ອງການປະຕິບັດຄຳຕັດສິນຂອງສານ ຕ້ອງສົ່ງຄຳສັ່ງປິດສຳນວນຄຳຕັດສິນຂອງສານໃຫ້ຄູ່ຄວາມ, ສະພາປະຊາຊົນ, ອົງການປົກຄອງ, ອົງການໄອຍະການປະຊາຊົນ ຂັ້ນຂອງຕົນ ແລະ ກົມຄຸ້ມຄອງການປະຕິບັດຄຳ ຕັດສິນຂອງສານ ເພື່ອຊາບ. ຈາກນັ້ນ, ໃຫ້ປັບປຸງຂໍ້ມູນຢູ່ໂປຣແກຣມສະຖິຕິຢ່າງຖືກຕ້ອງ ແລ້ວຈຶ່ງເກັບມ້ຽນສຳນວນ ຄຳຕັດສິນຂອງສານ;

- ທຸກໆເດືອນ, ສາມເດືອນ, ຫົກເດືອນ ແລະ ໜຶ່ງປີ ຫ້ອງການປະຕິບັດຄຳຕັດສິນຂອງສານ ຕ້ອງສະຫຼຸບລາຍງານສະຖິຕິຄຳຕັດສິນພາຍໃນແຂວງ, ນະຄອນຫຼວງ ແລ້ວລາຍງານໃຫ້ພະແນກຍຸຕິທຳແຂວງ, ນະຄອນຫຼວງ ແລະ ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ຢ່າງເປັນປົກກະຕິ[3].

### 3. ພາລະບົດບາດຂອງໜ່ວຍງານປະຕິບັດຄຳຕັດສິນຂອງສານ

ໜ່ວຍງານປະຕິບັດຄຳຕັດສິນຂອງສານ ຊຶ່ງສ້າງຕັ້ງຂຶ້ນຢູ່ແຕ່ລະເມືອງ, ນະຄອນ, ເທດສະບານ ແມ່ນການຈັດຕັ້ງໜຶ່ງຂອງຫ້ອງການຍຸຕິທຳເມືອງ, ນະຄອນ, ເທດສະບານ ມີພາລະບົດບາດປະຕິບັດຄຳຕັດສິນຂອງສານ ແລະ ນິຕິກຳອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 5 (ໃໝ່) ຂອງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເຊັ່ນ:[4]

- ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕັດສິນຄະດີແພ່ງຂັ້ນຕົ້ນ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານປະຊາຊົນເມືອງ, ເທດສະບານ, ສານປະຊາຊົນແຂວງ, ນະຄອນຫຼວງ;

---

[3] ຄຳແນະນຳ ຂອງລັດຖະມົນຕີກະຊວງຍຕິທຳ ສະບັບເລກທີ 445/ກຍ, ລົງວັນທີ 5 ເມສາ 2019 ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບໃນການຄຸ້ມຄອງ ແລະ ການປະຕິບັດຄຳຕັດສິນຂອງສານ, ໜ້າທີ 3

[4] ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008, ມາດຕາ 17

- ຄຳສັ່ງ, ຄຳຊີ້ຂາດ ແລະຄຳຕັດສິນຄະດີອາຍາຂັ້ນຕົ້ນ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານປະຊາຊົນ ເມືອງ, ເທດສະບານ, ສານປະຊາຊົນແຂວງ, ນະຄອນ ກ່ຽວກັບການໃຊ້ແທນຄ່າເສັຍຫາຍທາງແພ່ງ, ໂທດປັບໃໝ, ໂທດຮິບຊັບ, ໂທດຮິບວັດຖຸສິ່ງຂອງ ແລະ ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ;

- ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາຄະດີແພ່ງຂັ້ນອຸທອນ ທີ່ໃຊ້ໄດ້ຢ່າງເດັດຂາດ ຂອງສານປະຊາຊົນ ແຂວງ, ນະຄອນ ແລະ ສານອຸທອນ;

- ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາຄະດີອາຍາຂັ້ນອຸທອນ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານປະຊາຊົນແຂວງ, ນະຄອນ ແລະ ສານອຸທອນ ກ່ຽວກັບການໃຊ້ແທນຄ່າເສັຍຫາຍທາງແພ່ງ, ໂທດປັບໃໝ, ໂທດຮິບຊັບ, ໂທດຮິບວັດຖຸສິ່ງຂອງ ແລະ ໂທດ ດັດສ້າງ ໂດຍບໍ່ຕັດອິດສະລະພາບ;

- ຄຳສັ່ງ, ຄຳຊີ້ຂາດ ແລະຄຳພິພາກສາຄະດີແພ່ງຂອງສານປະຊາຊົນສູງສຸດ ທີ່ບໍ່ສົ່ງ ຄະດີ ໃຫ້ສານຂັ້ນລຸ່ມພິຈາລະນາຄືນໃໝ່;

- ຄຳສັ່ງ, ຄຳຊີ້ຂາດ ແລະຄຳພິພາກສາຄະດີອາຍາ ຂອງສານປະຊາຊົນສູງສຸດ ທີ່ບໍ່ສົ່ງ ຄະດີ ໃຫ້ສານຂັ້ນລຸ່ມພິຈາລະນາຄືນໃໝ່ ກ່ຽວກັບການໃຊ້ແທນຄ່າເສັຍຫາຍທາງ ແພ່ງ, ໂທດປັບໃໝ, ໂທດຮິບຊັບ, ໂທດຮິບວັດຖຸສິ່ງຂອງ ແລະ ໂທດດັດສ້າງໂດຍ ບໍ່ຕັດອິດສະລະພາບ;

- ຄຳຕັດສິນ ຫລືຄຳພິພາກສາຂອງສານ ບອກວ່າໃຫ້ປະຕິບັດພາງ;

- ຄຳສັ່ງໃຫ້ປະຕິບັດບົດບັນທຶກການໄກ່ເກັ່ຍຂອງສານ;

- ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕັດສິນຂອງສານຕ່າງປະເທດ ທີ່ໃຊ້ໄດ້ຢ່າງເດັດຂາດ ຊຶ່ງ ສານປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຮັບຮູ້ ແລະ ໃຫ້ປະຕິບັດ;

- ບົດບັນທຶກການໄກ່ເກັ່ຍ ແລະ ຄຳຕັດສິນ ຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃນ ແລະ ຕ່າງປະເທດ ຕາມສົນທິສັນຍາລະຫວ່າງປະເທດ ທີ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ເຂົ້າຮ່ວມເປັນພາຄີ ຊຶ່ງ ໄດ້ຮັບການຢັ້ງຢືນຈາກສານປະຊາຊົນ[5].

**ໜ່ວຍງານປະຕິບັດຄຳຕັດສິນຂອງສານ ມີພາລະບົດບາດຕົ້ນຕໍດັ່ງນີ້:**

- ຄົ້ນຄວ້າຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ນິຕິກຳອື່ນ ເພື່ອກະກຽມປະຕິບັດ; ທວງເອົາຂອງກາງທີ່ມີຢູ່ໃນຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ໃນກໍລະນີທີ່ຍັງບໍ່ທັນໄດ້ຮັບ;

---

[5] ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008, ມາດຕາ 05

- ສະເໜີໃຫ້ສານທີ່ໄດ້ລົງຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ອະທິບາຍຢ່າງເປັນ ລາຍລັກອັກສອນ ກ່ຽວກັບບັນຫາໃດບັນຫາໜຶ່ງ ທີ່ຍັງບໍ່ທັນຈະແຈ້ງ;

- ສະເໜີຕໍ່ເຈົ້າໜ້າທີ່ຕຳຫລວດ ມີມາດຕະການ ຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີເຈດຕະນາຫລົບຫລີກການປະຕິບັດຄຳຕັດສິນຂອງສານ ໂດຍສະເພາະການອອກນອກປະເທດ;

- ອອກໝາຍຮຽກຄູ່ຄວາມ ເພື່ອປະຕິບັດຄຳຕັດສິນຂອງສານ;

- ອອກຄຳສັ່ງອາຍັດ, ຄຳສັ່ງຍຶດຊັບ, ຄຳສັ່ງຍົກຍ້າຍ, ຄຳສັ່ງໃຫ້ພາຕົວ, ຄຳສັ່ງປັບ ໃໝ ແລະຄຳສັ່ງອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ ໜ່ວຍໄກ່ເກ່ຍຂັ້ນບ້ານ ເພື່ອ ຊ່ວຍໃນການປະຕິບັດ ຄຳຕັດສິນຂອງສານ;

- ສະເໜີຂໍຄຳເຫັນນຳຂັ້ນເທິງຂອງຕົນ ໃນການປະຕິບັດຄຳຕັດສິນຂອງ ສານ ທີ່ຫຍຸ້ງຍາກສັບສົນ;

- ລາຍງານການປະຕິບັດຄຳຕັດສິນຂອງສານໃຫ້ໄອຍະການປະຊາຊົນຂັ້ນຂອງຕົນ ຢ່າງເປັນປົກກະຕິ ຫລື ຕາມການສະເໜີ;

- ລາຍງານກ່ຽວກັບການປະຕິບັດໜ້າທີ່ວຽກງານຂອງຕົນ ໃຫ້ຫ້ອງການຍຸຕິທຳ ເມືອງ, ເທດສະບານ ແລະຫ້ອງການປະຕິບັດຄຳຕັດສິນຂອງສານ ຢ່າງເປັນປົກກະຕິ;

- ປະຕິບັດສິດ ແລະ ໜ້າທີ່ອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ[6].

ນອກຈາກພາລະບົດບາດທີ່ໄດ້ກ່າວມາຂ້າງເທິງນັ້ນ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຕ້ອງແບ່ງຄວາມຮັບຜິດຊອບລະຫວ່າງຫົວໜ້າໜ່ວຍງານ ແລະ ຮອງຫົວໜ້າໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃຫ້ຈະແຈ້ງ ແລະ ຂາດຕົວໃນການບໍລິຫານວຽກງານກ່ຽວກັບການປະຕິບັດຄຳຕັດສິນຂອງສານ ໃນນັ້ນໃຫ້ເອົາໃຈໃສ່ຍົກສູງຄວາມຮັບຜິດຊອບດັ່ງນີ້:

- ທຸກສຳນວນຄຳຕັດສິນຂອງສານທີ່ໄດ້ຮັບຈາກຫ້ອງການຍຸຕິທຳ ຕ້ອງຮັບປະກັນຈົດເຂົ້າ ຂາເຂົ້າໃຫ້ຖືກຕ້ອງ, ຄົບຖ້ວນພາຍໃນກຳນົດ ໜຶ່ງວັນ ລັດຖະການ, ຈາກນັ້ນ ຫົວໜ້າໜ່ວຍງານຕ້ອງຄົ້ນຄວ້າ ແລະ ມີຄຳເຫັນມອບ ສຳນວນໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານ ໃນກຳນົດ ສີ່ວັນ ລັດຖະການ ພາຍໃນກຳນົດເວລາດັ່ງກ່າວ ຕ້ອງສົ່ງໃຫ້ໜ່ວຍງານສະຖິຕິບັນທຶກເຂົ້າໂປຣແກຣມ ໃຫ້ສຳເລັດ;

- ຫົວໜ້າ, ຮອງຫົວໜ້າໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງຕິດຕາມ, ກວດກາ ແລະ ຊຸກຍູ້ພະນັກງານປະຕິບັດຄຳຕັດສິນຂອງສານທີ່ຮັບຜິດຊອບຄະດີໃຫ້ຂຶ້ນແຜນການນຳເອົາຄຳຕັດສິນອອກມາປະຕິບັດ;

---

[6] ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008 ມາດຕາ 19

- ທຸກຄຳຕັດສິນທີ່ຈະນຳມາປະຕິບັດ ຕ້ອງນຳເຂົ້າຜ່ານກອງປະຊຸມ ເພື່ອປຶກສາຫາລື ກ່ຽວກັບວິທີການ ,ຂັ້ນຕອນ , ກຳນົດເວລາການປະຕິບັດ. ທຸກກໍລະນີ ທີ່ຈະຕ້ອງໄດ້ຍົກຍ້າຍບາງຄະດີທີ່ເຫັນວ່າຈະມີຜົນກະທົບຕໍ່ການປະຕິບັດ ໜ່ວຍງານຕ້ອງໄດ້ລາຍງານຂໍທິດຊີ້ນຳຈາກຫ້ອງການປະຕິບັດຄຳຕັດສິນຂອງສານ, ອົງການປົກຄອງ, ອົງການໄອຍະ ການປະຊາຊົນ ຂັ້ນຂອງຕົນ;

- ສຳລັບຄຳຕັດສິນທີ່ໄດ້ປະຕິບັດສຳເລັດ ພາຍຫຼັງຫົວໜ້າໜ່ວຍງານ ໄດ້ຮັບບົດລາຍງານຈາກພະນັກງານປະຕິບັດຄຳຕັດສິນຂອງສານຜູ້ຮັບຜິດຊອບຄະດີ ຕ້ອງກວດກາໃຫ້ລະອຽດ, ຖ້າເຫັນວ່າການປະຕິບັດຜ່ານມາໄດ້ດຳເນີນຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ຈຶ່ງອອກຄຳສັ່ງປິດສຳນວນຄຳຕັດສິນຂອງສານ;

- ໜ່ວຍງານປະຕິບັດຄຳຕັດສິນຂອງສານຕ້ອງສົ່ງຄຳສັ່ງປິດສຳນວນຄຳຕັດສິນຂອງສານໃຫ້ຄູ່ຄວາມ, ອົງການປົກຄອງ,ອົງການໄອຍະການປະຊາຊົນ ຂັ້ນຂອງຕົນ ແລະ ຫ້ອງການປະຕິບັດຄຳຕັດສິນຂອງສານ ເພື່ອຊາບ .ຈາກນັ້ນ , ໃຫ້ປັບປຸງຂໍ້ມູນຢູ່ໂປຣແກຣມສະຖິຕິຢ່າງຖືກຕ້ອງ ແລ້ວຈຶ່ງເກັບມ້ຽນສຳນວນຄຳຕັດສິນຂອງສານ;

- ທຸກເດືອນ, ສາມເດືອນ, ຫົກເດືອນ ແລະ 1 ປີ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງສະຫຼຸບລາຍງານສະຖິຕິຄຳຕັດສິນ ສົ່ງໃຫ້ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານແຂວງ, ນະຄອນຫຼວງ ແລະ ຫ້ອງການຍຸຕິທຳເມືອງ ຢ່າງເປັນປົກກະຕິ.

**ໝາຍເຫດ:** ຄືດັ່ງທີ່ໄດ້ກ່າວມາຂ້າງເທິງ, ນອກຈາກຫ້ອງການປະຕິບັດຄຳຕັດສິນຂອງສານ ແລະ ໜ່ວຍງານປະຕິບັດຄຳຕັດສິນຂອງສານແລ້ວຍັງມີຫ້ອງການປະຕິບັດຄຳຕັດສິນຂອງສານທະຫານທີ່ມີພາລະບົດບາດໃນການປະຕິບັດຄຳສັ່ງ ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານທະຫານ ທີ່ໃຊ້ໄດ້ຢ່າງເດັດຂາດ; ມີຄວາມຮັບຜິດຊອບລາຍງານສະພາບການປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານທະຫານໃຫ້ອົງການໄອຍະການທະຫານທີ່ໄດ້ປະຕິບັດຢ່າງຖືກຕ້ອງ ແລະ ຄົບຖ້ວນຕາມກົດໝາຍໄດ້ກຳນົດໄວ້ ລາຍງານການປະຕິບັດຄຳຕັດ ສິນຂອງສານທະຫານ ເປັນຕົ້ນການປະຕິບັດໂທດທາງອາຍາ; ການສະເໜີປ່ຽນແປງ, ລົບລ້າງ ຫຼື ໂຈະການ ປະຕິບັດທີ່ບໍ່ຖືກຕ້ອງຕາມຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານທະຫານໃຫ້ອົງການໄອຍະການທະຫານ[7].

## References:


1. ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008;
2. ປທ ປາດຖະໜາ ບຸນເພັງ, ບົດສອນກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ປີ 2018.


[7] ປທ ປາດຖະໜາ ບຸນເພັງ, ບົດສອນກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ປີ 2018, ໜ້າ 11.